

ເອກະສານນະໂຍບາຍໂດຍຫຍໍ້

ການກະສິກຳ-ປ່າໄມ້ ແບບປະສົມປະສານໃນອາຊີຕາເວັນອອກສຽງໃຕ້

ການເຊື່ອມໂຍງລະຫວ່າງປ່າໄມ້ ແລະ ກະສິກຳ ເພື່ອການພັດທະນາທີ່ຍືນຍົງ

ກະກຽມໂດຍ: ສູນກະສິກຳ-ປ່າໄມ້ ໂລກ ປະຈຳພາກພື້ນອາຊີຕາເວັນອອກສຽງໃຕ້ (World Agroforestry; ICRAF)
ພາຍໃຕ້ການຮ່ວມມືກັບ ກຸ່ມເຮັດວຽກກ່ຽວກັບປ່າໄມ້ສັງຄົມ (ASEAN Working Group on Social Forestry)

World Agroforestry Policy Brief No. 105

ຮູບພາບໂດຍ: World Agroforestry/Meine van Noordwijk

ເອກະສານນະໂຍບາຍໂດຍຫຍໍ້

ການກະສິກຳ-ປ່າໄມ້ ແບບປະສົມປະສານໃນອາຊີຕາເວັນອອກສຽງໃຕ້

ການເຊື່ອມໂຍງລະຫວ່າງປ່າໄມ້ ແລະ ກະສິກຳ ເພື່ອການພັດທະນາທີ່ຍືນຍົງ







Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC



ກະກຽມໂດຍ: ສູນກະສິກຳ-ປ່າໄມ້ ໂລກ ປະຈຳພາກພື້ນອາຊີຕາເວັນອອກສຽງໃຕ້ (World Agroforestry; ICRAF) ພາຍໃຕ້ການຮ່ວມມືກັບ ກຸ່ມເຮັດວຽກກ່ຽວກັບປ່າໄມ້ສັງຄົມ (ASEAN Working Group on Social Forestry)

ບັນຊີອັກສອນຫຍໍ້


AMS	*ASEAN Member State* (ປະເທດສະມາຊິກອາຊຽນ)
ASEAN	*Association of Southeast Asian Nations* (ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້)
ASFCC	*ASEAN-Swiss Partnership on Social Forestry and Climate Change* ການຮ່ວມມືອາຊຽນ-ສະວິດເຊີແລນ ດ້ານປ່າໄມ້ສັງຄົມ ແລະ ການປ່ຽນແປງດິນຟ້າອາກາດ)
AWG-SF	*ASEAN Working Group on Social Forestry* (ເຄືອຄ່າຍປ່າໄມ້ສັງຄົມອາຊຽນ)

ການນຳຂອງຫລາຍໆປະເທດທີ່ໄດ້ຮັບຮອງເອົາ 17 ເປົ້າໝາຍການພັດທະນາແບບຍືນຍົງ ແລະ ເຊັ່ນເປັນປະເທດພາຄີໃນສົນທິສັນຍາປາຣີ ກ່ຽວກັບການປ່ຽນແປງດິນຟ້າອາກາດ ໄດ້ຕົກລົງກັນນຳໃຊ້ວິທີການແກ້ໄຂບັນຫາແບບປະສົມປະສານ ໃນທຸກຂະແໜງການ. ການແກ້ໄຂບັນຫາພຽງແຕ່ບາງສ່ວນ ເຊິ່ງກໍໃຫ້ເກີດບັນຫາທີ່ໃຫຍ່ກວ່າໃນເຂດອື່ນ ແມ່ນບໍ່ເປັນທີ່ຍອມຮັບແລ້ວ.
ໃນຂະແໜງການນຳໃຊ້ທີ່ດິນ, ປະຫວັດຄວາມເປັນມາ ແລະ ຂະແໜງການ ທີ່ແຍກກັນ ເປັນຕົ້ນແມ່ນວຽກງານກະສິກຳ ແລະ ປ່າໄມ້ ເປັນອຸປະສັກໃນການແກ້ໄຂບັນຫາແບບປະສົມປະສານ. ການກະສິກຳ-ປ່າໄມ້ ແບບປະສົມປະສານ ເປັນແນວຄວາມຄິດປະສົມປະສານທີ່ເຊື່ອມໂຍງລະຫວ່າງຂະແໜງການ ໃນມຸມມອງການນຳໃຊ້ພື້ນທີ່ຮ່ວມກັນ.
ບັນດາປະເທດສະມາຊິກອາຊຽນທີ່ມີໂອກາດນຳໃຊ້ເປົ້າໝາຍການພັດທະນາແບບຍືນຍົງ, ນະໂຍບາຍກ່ຽວກັບການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ເປົ້າໝາຍຍຸດທະສາດອາຊຽນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ ເພື່ອຊ່ວຍເພີ່ມບົດບາດໃນການຊ່ວຍແກ້ໄຂບັນຫາ. ການເຊື່ອມໂຍງລະຫວ່າງກະສິກຳ ແລະ ປ່າໄມ້ ໃນການນຳໃຊ້ທີ່ດິນ ສາມາດປ່ຽນຈຸດສຸມຈາກການໃຊ້ປະໂຫຍດທີ່ຈະໄດ້ຈາກລະບົບຫລາຍກວ່າການເບິ່ງທີ່ອົງປະກອບພາຍນອກຂອງລະບົບພຽງຢ່າງດຽວ ເພື່ອໃຫ້ບັນລຸຈຸດປະສົງການເຮັດໜ້າທີ່ຫລາຍຢ່າງຂອງຕົ້ນໄມ້ ປົກຫຸ້ມ ແລະ ຊ່ວຍໃນການປັບໂຕ, ຫລຸດຜ່ອນຜົນກະທົບ ແລະ ເຮັດໜ້າທີ່ບໍລິການທາງດ້ານລະບົບນິເວດ.

ລຳດັບ	ປະເດັນຫລັກ	ຂໍ້ສະເໜີຕໍ່ນະໂຍບາຍ
1	ຄຳວ່າ"ປ່າໄມ້" ແລະ "ວຽກງານປ່າໄມ້" ແມ່ນມີຄວາມໝາຍແຕກຕ່າງຈາກຄຳວ່າ "ຊາວກະສິກອນ" ແລະ "ວຽກງານກະສິກຳ" ໃນທາງກົດໝາຍ, ກົດລະບຽບ, ຂະແໜງການ, ການສຶກສາ ແລະ ມຸມມອງອື່ນໆຂອງການບໍລິຫານ. ທັງສອງວຽກງານນີ້ ສ່ວນ ຫລາຍຖືກຕີລາຄາເປັນວຽກງານທີ່ກົງກັນຂ້າມກັນ ແລະ ເປັນຄູ່ແຂ່ງກັນ.	ຄຳນິຍາມທາງວິຊາການຂອງຄຳວ່າ "ປ່າໄມ້" ແມ່ນມີຄວາມສຳຄັນສຳລັບກອບແນວຄວາມຄິດນະໂຍບາຍຕ່າງໆທີ່ກ່ຽວຂ້ອງເຊັ່ນ: ການຫລຸດລົງຂອງ ເນື້ອທີ່ປ່າໄມ້, ການ ປູກປ່າທົດແທນ ແລະ ການປູກຕົ້ນ ໄມ້ໃນພື້ນທີ່ກະສິກຳ, ການລະດົມບໍ່ໃຫ້ມີການຕັດໄມ້ທຳລາຍປ່າເປັນສູນ, ການຫລຸດການປ່ອຍທາດອາຍພິດເຮືອນແກ້ວຈາກການຕັດໄມ້ທຳລາຍປ່າ ແລະ ການຊຸດໂຊມ ຂອງປ່າໄມ້ ແລະ ຕົວຊີ້ວັດເປົ້າໝາຍການພັດທະນາ ແບບຍືນຍົງ.
2	ໃນອາຊີຕາເວັນອອກສຽງໃຕ້, 77% ຂອງເນື້ອທີ່ກະສິກຳທັງໝົດມີເນື້ອທີ່ຕົ້ນໄມ້ປົກຫຸ້ມກວມເອົາຢ່າງ ນ້ອຍ 10% ແລະ ໃນນັ້ນ 47% ຂອງເນື້ອທີ່ມີຕົ້ນໄມ້ປົກຫຸ້ມກວມເອົາຢ່າງນ້ອຍ 30% ຂອງເນື້ອທີ່. ຖ້າຫາກກຳນົດຕາມໜ້າທີ່ທາງດ້ານນິເວດວິທະຍາ ແທນຮູບແບບຂະແໜງການ, ພູມສັນຖານເຂດດັ່ງ ກ່າວສາມາດກຳນົດເປັນພື້ນທີ່ປ່າໄມ້ໄດ້.	ໂດຍທົ່ວໄປແລ້ວ, ຕົ້ນໄມ້ກໍເປັນສ່ວນໜຶ່ງ ຂອງພື້ນທີ່ກະສິກຳ, ພື້ນທີ່ອ້ອມຂ້າງ ແລະ ໃນຕົວ ເມືອງ ເຊິ່ງໄດ້ສະໜອງ ປະໂຫຍດຫລາຍ ຢ່າງໃຫ້ແກ່ສັງຄົມ. ຕົ້ນໄມ້ເຫລົ່ານີ້ ຄວນໄດ້ຮັບການສົ່ງເສີມຈາກບັນດານະໂຍບາຍຕ່າງໆຄືດັ່ງທີ່ຕົ້ນໄມ້ໃນປ່າໄດ້ຮັບ.
3	ການກະສິກຳ-ປ່າໄມ້ ແບບປະສົມປະສານເປັນ ການເຊື່ອມໂຍງລະຫວ່າງການກະສິກຳ ແລະ ປ່າໄມ້ ທີ່ພັດທະນາມາຈາກການທົດລອງ ຈາກລະດັບໂຕແບບດ້ານເຕັກນິກ ໂດຍມີຈຸດປະສົງວິເຄາະການນຳ ໃຊ້ພື້ນທີ່ຂອງການປະສົມປະສານລະຫວ່າງປ່າໄ ມ້ ແລະ ກະສິກຳ ເພື່ອເບິ່ງຜົນການຢູ່ຮ່ວມກັນ ແລະ ການຂ້າມຜ່ານຂອງລະບົບດັ່ງກ່າວ. ແນວຄວາມຄິດກ່ຽວກັບການກະສິກຳ-ປ່າໄມ້ ແບບລວມ ທີ່ໂຮມເຂົ້າໃນນະໂຍບາຍດຽວກັນກຳລັງໄດ້ຮັບ ການພັດທະນາ ເພື່ອກາຍເປັນທາງເລືອກ ໜຶ່ງທີ່ສຳຄັນ.	ມີບາງປະເທດໄດ້ສ້າງນະໂຍບາຍການກະສິກຳ-ປ່າໄມ້ ແບບປະສົມປະສານ ທີ່ບໍ່ໄດ້ແບ່ງຂາດໂຕລະຫວ່າງປ່າໄມ້ ແລະ ກະສິກຳ-ປ່າໄມ້ແບບປະສົມປະສານ ຫລື ກະສິກຳ-ປ່າໄມ້ແບບປະສົມປະສານ ກັບການກະສິກຳ ແຕ່ອີງໃສ່ການດຳເນີນງານຕົວຈິງຂອງພາກລັດ ແລະ ເອກະຊົນ, ຄ່າໃຊ້ຈ່າຍ ແລະ ປະໂຫຍດ ທີ່ໄດ້ຈາກການປົກຫຸ້ມຂອງພືດຫລາຍຊະນິດ.
4	ການປະສົມປະສານລະຫວ່າງຕົ້ນໄມ້ ແລະ ກະສິກຳ-ປ່າໄມ້ ເຂົ້າໃນພື້ນທີ່ກະສິກຳສາມາດປະກອບສ່ວນ ໃນການບັນລຸຫລາຍໆເປົ້າໝາຍພັດທະນາແບບຍືນຍົງ.	ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ຮຽກຮ້ອງໃຫ້ມີການເອົາໃຈໃສ່ຕໍ່ຜົນປະໂຫຍດທີ່ໄດ້ ຈາກໜ້າທີ່ແທນການສຸ່ມໃສ່ແຕ່ຮູບແບບ. ວິທີການປະສົມປະສານລະຫວ່າງກະສິກຳ ແລະ ປ່າໄມ້ ແລະ ນະໂຍບາຍທີ່ສອດຄ່ອງ ຈະສ້າງໂອກາດໃນການ ເຊື່ອມໂຍງຊ່ອງຫວ່າງລະຫວ່າງສອງໜ້າທີ່ທີ່ແຍກຈາກກັນນັ້ນເຂົ້າຫາກັນໄດ້.

ປ່າໄມ້ ແລະ ວຽກງານປ່າໄມ້ ໄດ້ຖືກຕີລາຄາແຕກຕ່າງຈາກຊາວກະສິກອນ ແລະ ການກະສິກຳ

ຕາມກົດໝາຍ, ລະບຽບການ, ຂະແໜງການ, ການສຶກສາ ແລະ ມຸມມອງອື່ນໆຂອງການບໍລິຫານ, ການນຳໃຊ້ທີ່ດິນ ສຳລັບການກະສິກຳ ເພື່ອສະໜອງຜະລິດຕະພັນ ແລະ ປະໂຫຍດໃຫ້ກັບທ້ອງຖິ່ນ ແລະ ຕະຫລາດ ແມ່ນຖືກຕີລາຄາແຕກຕ່າງກັນຫລາຍຈາກການນຳໃຊ້ດິນສຳລັບຂະແໜງການ ປ່າໄມ້ ເຖິງແມ່ນວ່າຈະສະໜອງຜະລິດຕະພັນ ແລະ ປະໂຫຍດທີ່ຄືກັນ ຫລື ຄ້າຍຄືກັນກໍຕາມ. ຄວາມແຕກຕ່າງລະຫວ່າງ ສອງຂະແໜງການນີ້ມີປະຫວັດອັນຍາວນານ. ໃນທະວີບເອີລົບ, ແນວຄວາມຄິດ ຂອງຄຳວ່າ “ປ່າໄມ້” ກຳເນີດຂຶ້ນບົນພື້ນຖານການຫ້າມປະຊາຊົນເຂົ້ານຳໃຊ້, ການຮັກສາໄວ້ເພື່ອລ່າສັດ, ຂຸດຄົ້ນໄມ້ສຳລັບ ສ້າງເຮືອໃຫ້ກອງທັບທະຫານເຮືອ ຫລື ເພື່ອຈຸດປະສົງອື່ນໆຂອງລັດຖະບານ. ປ່າໄມ້ ແລະ ພື້ນທີ່ກະສິກຳ ໄດ້ຖືກເບິ່ງໃນທາງກົງກັນຂ້າມກັນ ແລະ ຖືວ່າເປັນຄູ່ແຂ່ງກັນ. ແນວຄວາມ ຄິດແບບເດີມນີ້ໄດ້ສະທ້ອນໃຫ້ເຫັນ ໃນການສຶກສາ ແລະ ວິທະຍາສາດ ກ່ຽວກັບປ່າໄມ້ ແລະ ກະສິກຳ ທີ່ກຳລັງດຳເນີນ ໄປໃນທິດທາງແຕກຕ່າງກັນ ເຊິ່ງສ້າງຄວາມແຕກຕ່າງ ທາງດ້ານວັດທະນະທຳ ແລະ ແນວຄວາມຄິດ ທີ່ພົບເຫັນ ໃນທົ່ວໂລກ.




ຮູບພາບ 1: ແນວຄວາມຄິດກ່ຽວກັບປ່າໄມ້ ທີ່ຖືເອົາການປົກຫຸ້ມຂອງຕົ້ນໄມ້ເປັນຫລັກ ທຽບໃສ່ ແນວຄວາມຄິດ ຈາກບັນດາສະຖານບັນຕ່າງໆ.

ໃນເວທີປຶກສາຫາລືກ່ຽວກັບການປ່ຽນແປງດິນຟ້າອາກາດ ໄດ້ຖືເອົາ ວຽກງານປ່າໄມ້ ແລະ ການກະສິກຳ ເປັນສອງ ຫົວເລື່ອງທີ່ແຕກຕ່າງກັນ, ເຖິງແມ່ນວ່າສາຍພົວພັນຂອງທັງສອງວຽກງານນີ້ໄດ້ເພີ່ມຂຶ້ນໃຫ້ເຫັນໃນບັນດາບະໂຍບາຍຈຸດສຸມສຳຄັນຕ່າງ ໆ. ເຖິງຢ່າງໃດກໍຕາມ, ການກຳນົດນະໂຍບາຍ ກໍພົບຄວາມຫຍຸ້ງຍາກທີ່ຈະນິຍາມຄຳວ່າ ‘ປ່າໄມ້’” ໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ. ຄຳນິຍາມທີ່ນິຍົມໃຊ້ຫລາຍແມ່ນ ມາຈາກອົງການອາຫານໂລກ (FAO 2000) ເຊິ່ງໄດ້ກ່າວໄວ້ຢ່າງມີປະສິດທິຜົນວ່າ ທີ່ດິນທີ່ມີຈຳນວນຕົ້ນໄມ້ທີ່ເໝາະສົມສາມາດຖືເປັນ ‘ປ່າໄມ້’ ໄດ້ໃນກໍລະນີທີ່ພື້ນທີ່ດັ່ງກ່າວບໍ່ແມ່ນພື້ນທີ່ດິນກະສິກຳ ຫລື ທີ່ຢູ່ອາໄສ. ເມື່ອອີງຕາມທິດສະດີແລ້ວພົບວ່າຄວາມ ແຕກຕ່າງລະຫວ່າງຂະແໜງການໃນພື້ນທີ່ທີ່ຖືວ່າເປັນປ່າໄມ້ ແລະ ປະເພດດິນອື່ນ ເຊິ່ງສ່ວນໃຫຍ່ ແມ່ນອີງໃສ່ປະຫວັດ ການນຳໃຊ້ທີ່ຜ່ານມາ. ເມື່ອກ່າວເຖິງຄຳວ່າ “ໄມ້ປົກຫຸ້ມ” ແມ່ນສາມາດມີຫລາຍເລື່ອງເລົ່າທີ່ແຕກຕ່າງກັນທີ່ກ່ຽວພັນ ເຖິງໜ້າທີ່ທີ່ໄດ້ຈາກການປົກຫຸ້ມຂອງຕົ້ນໄມ້.


ການປົກຫຸ້ມຂອງຕົ້ນໄມ້ໃນພື້ນທີ່ກະສິກຳ ໃນອາຊີຕາເວັນອອກສຽງໃຕ

ໃນພາບຖ່າຍດາວທຽມ, ຕົ້ນໄມ້ ແລະ ຕົ້ນໄມ້ປົກຫຸ້ມສາມາດໄຈ້ແຍກໄດ້ຈາກພືດຂະນິດອື່ນໄດ້. ແຜນວາດສັງລວມຈາກສ່ວນໜຶ່ງຂອງພື້ນທີ່ດິນກະສິກຳ (ຍົກເວັ້ນພື້ນທີ່ທີ່ບໍ່ລົງທະບຽນເປັນເຂດປ່າໄມ້ໃນຖານຂໍ້ມູນສາກົນທີ່

ຄຸ້ມຄອງໂດຍອົງການອາຫານໂລກ) ເຊິ່ງກວມເອົາຕົ້ນໄມ້ປຸກຫຸ້ມຫລາຍລະດັບ (ຮູບພາບ 2) ສະແດງໃຫ້ເຫັນພື້ນທີ່ດິນກະສິກຳຂະໜາດໃຫຍ່ພໍສົມຄວນທີ່ສາມາດຕີລາຄາເປັນພື້ນທີ່ປ່າໄມ້ໄດ້. ໃນອາຊີຕາເວັນອອກສຽງໃຕ້, 77% ຂອງພື້ນ ທີ່ກະສິກຳທັງໝົດມີເນື້ອທີ່ຕົ້ນໄມ້ປົກຫຸ້ມກວມເອົາຢ່າງນ້ອຍ 10% ແລະ ໃນນັ້ນ 47% ຂອງ ເນື້ອທີ່ມີຕົ້ນໄມ້ປົກຫຸ້ມກວມເອົາຢ່າງນ້ອຍ 30% ຂອງເນື້ອທີ່ ເຊິ່ງພື້ນທີ່ເຫລົ່ານີ້ສາມາດຖືເປັນເຂດປ່າໄມ້ໄດ້, ຖ້າຫາກຖືເອົາຕາມເກນຄວາມສຳຄັນໃນໜ້າທີ່ຂອງລະບົບນິເວດແທນຮູບແບບຂອງສະຖານັນຄຸ້ມຄອງ (Zomer et al 2014). ຕົ້ນໄມ້ປົກຫຸ້ມໃນພາກພື້ນອາຊີຕາເວັນອອກສຽງໃຕ້ແມ່ນກວມເອົາພື້ນທີ່ຂະໜາດໃຫຍ່ ແຕ່ພື້ນທີ່ດັ່ງກ່າວຂຶ້ນກັບປະລິມານນ້ຳຝົນ (ຮູບພາບ 2). ພື້ນທີ່ດິນກະສິກຳໃນທະວີບອາເມລິກາກາງແມ່ນມີພື້ນທີ່ຂະໜາດໃຫຍ່ກ່າວ. ການປົກຫຸ້ມ ຂອງຕົ້ນໄມ້ ໃນນອກເຂດຂອງປ່າໄມ້ ແມ່ນມີການປ່ຽນແປງຕະຫລອດເວລາ ເຊິ່ງພົບວ່າມີການເພີ່ມຂຶ້ນ ແລະ ຫລຸດລົງ ຕາມການປະເມີນຜົນໃນໄລຍະ 10 ປີ (ຮູບພາບ 3).



ຮູບພາບ 2: ການປົກຫຸ້ມຂອງຕົ້ນໄມ້ໃນພື້ນທີ່ກະສິກຳ ອີງຕາມປະລິມານນ້ຳຝົນ (Zomer et al 2014).



ຮູບພາບ 3: ການປ່ຽນແປງການປົກຫຸ້ມຂອງຕົ້ນໄມ້ໃນເຂດກະສິກຳ (ທີ່ບໍ່ແມ່ນເຂດປ່າໄມ້) ໃນອາຊີຕາເວັນອອກ ສຽງໃຕ້ (Zommer et al 2016).


ການກະສິກຳ-ປ່າໄມ້ ແບບປະສົມປະສານ ເປັນຈຸດເຊື່ອມຕໍ່ລະຫວ່າງປ່າໄມ້ ແລະ ກະສິກຳ

ແນວຄວາມຄິດກ່ຽວກັບການກະສິກຳ-ປ່າໄມ້ ແບບປະສົມປະສານ (ຮູບພາບ 4) ໄດ້ພັດທະນາຂຶ້ນ ມາຈາກການສຶກສາ ຂະໜາດນ້ອຍກ່ຽວກັບການປະສົມປະສານລະຫວ່າງຕົ້ນໄມ້, ພືດກະສິກຳ ແລະ ສັດລ້ຽງ ເຊັ່ນລະບົບ “taungya”” ຢູ່ມຽນມ້າ ແລະ “tumpang sari”” ຢູ່ອິນໂດເນເຊຍ ການເປັນຫລາຍລະບົບ ທີ່ຄວນໄດ້ຮັບການສົ່ງເສີມ ພ້ອມທັງຄວນມີການສ້າງຄວາມເຂັ້ມແຂງ ແລະ ດຳເນີນການຄົ້ນຄວ້າວິໃຈຕໍ່.




ຮູບພາບ 4 ແນວຄວາມຄິດການກະສິກຳ-ປ່າໄມ້ ແບບປະສົມປະສານ ໃນເບື້ອງຕົ້ນ ໃນຮູບແບບເທັກໂນໂລຢີ

ແນວຄວາມຄິດການກະສິກຳ-ປ່າໄມ້ ແບບປະສົມປະສານ ກວມເອົາວິທີການຄຸ້ມຄອງພື້ນທີ່ຂະໜາດກວ້ ໆ (ຮູບພາບ 5) ເຊິ່ງກວມເອົາ ການປູກໄມ້ໃນຟາມ ແລະ ການເຮັດຟາມໃນປ່າ. ບັນຫາຕ່າງໆເຊັ່ນ: ບັນຫາກ່ຽວກັບສິດນຳໃຊ້ (ສິດໃນການນຳໃຊ້ພື້ນທີ່ປ່າ, ການຈັດປະເພດທີ່ດິນ ແລະ ການວາງແຜນ) ແລະ ຕະຫລາດ (ການລົງທຶນ, ຄວາມຕ້ອງການຜະລິດຕະພັນ, ສິ່ງຈູງໃຈ) ຈະໄດ້ຮັບການແກ້ໄຂຖ້າມີນະໂຍບາຍທີ່ມີ ຈຸດປະສົງນຳໃຊ້ການ ພັດທະນາໃຫ້ເກີດປະໂຫຍດສູງສຸດ.



ຮູບພາບ 5: ການກະສິກຳ-ປ່າໄມ້ ແບບປະສົມປະສານ ທີ່ຊ່ວຍວິທີການຄຸ້ມຄອງພື້ນທີ່ໃນຊຸມປີ 1990.


ຂັ້ນຕອນທີ່ສາມໃນການພັດທະນາທາງດ້ານກະສິກຳ-ປ່າໄມ້ ແບບປະສົມປະສານ ຮຽກຮ້ອງໃຫ້ຕ້ອງມີການປະສົມປະ ສານ ລະຫວ່າງນະໂຍບາຍ ກະສິກຳ+ປ່າໄມ້ (ຮູບພາບ 6), ໂຮມເອົານະໂຍບາຍທັງສອງເຂົ້າກັນ ເພື່ອໃຫ້ສາມາດນຳ ໃຊ້ໄດ້ຢ່າງທົ່ວເຖິງໃນການຢູ່ຮ່ວມກັນຂອງ



ຮູບພາບ 6 ກະສິກຳບອກປ່າໄມ້ ໃຫ້ກາຍເປັນນະໂຍບາຍສະເພາະ

ທຸກຊະນິດພັນໄມ້-ຊາວກະສິກອນ-ປ່າໄມ້ ພ້ອມທັງເປັນການປະກອບສ່ວນ ເຂົ້າໃນການບັນລຸເປົ້າໝາຍ ການພັດທະນາແບບຍືນຍົງໃນຫລາຍໆດ້ານ.

ການກະສິກຳ-ປ່າໄມ້ ແບບປະສົມປະສານ ຍັງສາມາດສ້າງຈຸດເຊື່ອມຕໍ່ລະຫວ່າງການກະສິກຳ ແລະ ປ່າໄມ້ ໄດ້ ແລະ ເປັນວິທີການຄຸ້ມຄອງການນຳໃຊ້ທີ່ດິນແບບລວມ ເພື່ອປະກອບສ່ວນໃນການບັນລຸເປົ້າໝາຍການພັດທະນາເສດຖະກິດ ໂລກແບບຍືນຍົງ (ຮູບພາບ 7). ການກະສິກຳ-ປ່າໄມ້ ແບບປະສົມປະສານ ຊ່ວຍໃຫ້ຜູ້ສ້າງນະໂຍບາຍສາມາດປະຕິບັດ ວຽກງານໄດ້ໄວຂຶ້ນກວ່າເກົ່າ ໂດຍການສ້າງໂຄງສ້າງທີ່ຄົບຖ້ວນ ເພື່ອຊ່ວຍປັບທິດທາງການເຮັດວຽກຮ່ວມກັນລະຫວ່າງ ພາກລັດ ແລະ ເອກະຊົນ ເພື່ອສ້າງສາຍພົວພັນໃນລະດັບພູມສັນຖານ ທີ່ສາມາດຊ່ວຍບັນລຸເປົ້າໝາຍທັງສອງ ຢ່າງໃນການຮັກສາສິ່ງແວດລ້ອມ ແລະ ສົ່ງເສີມການເຕີບໂຕຂອງເສດຖະກິດ. ຄວາມມຸ້ງຫວັງທີ່ຈະເປັນລະບົບທີ່ສະ ຫລາດໃນດ້ານດິນຟ້າອາກາດ “Climate Smart” ແມ່ນໄດ້ຖືກຟາກຝັງໄວ້ໃນ ການກະສິກຳ-ປ່າໄມ້ ແບບປະສົມ ປະສານ ແລະ ຊ່ວຍສະໜອງປັດໃຈ ເພື່ອການປ່ຽນແປງທີ່ຈຳເປັນ.



ຮູບພາບ 7 ຕົ້ນໄມ້ເປົ້າໝາຍການພັດທະນາແບບຍືນຍົງ

ການກະສິກຳ-ປ່າໄມ້ ແບບປະສົມປະສານ ເປັນແນວຄວາມຄິດປະສົມປະສານ ເພື່ອຊ່ວຍບັນລຸ ເປົ້າໝາຍການພັດທະນາແບບຍືນຍົງ.

ໃນເອກະສານນະໂຍບາຍໂດຍຫຍໍ້ສະບັບຜ່ານມາ (van Noordwijk et al 2015), ພວກເຮົາໄດ້ສັງລວມສີ່ວິທີ ທີ່ ການກະສິກຳ-ປ່າໄມ້ ແບບປະສົມປະສານ ສາມາດຊ່ວຍປະກອບສ່ວນໃນການບັນລຸເປົ້າໝາຍພັດທະນາ ແບບຍືນຍົງໄດ້.

1. ການກະສິກຳ-ປ່າໄມ້ ແບບປະສົມປະສານ ເປັນລະບົບການນຳໃຊ້ທີ່ດິນ ທີ່ຢູ່ລະຫວ່າງປ່າໄມ້ ແລະ ການກະສິກຳ ທີ່ມີການປະສົມປະສານການປູກຕົ້ນໄມ້, ພືດກະສິກຳ ແລະ ສັດລ້ຽງທີ່ເໝາະສົມ ເພື່ອສະໜອງອາຫານ ແລະ ໃຫ້ປະໂຫຍດ ໃນຫລາຍໆດ້ານເຊັ່ນ: ອາຫານທີ່ຄົບສາອາຫານ, ພະລັງງານທົດແທນ, ນ້ຳສະອາດ ແລະ ຊີວະນາໆພັນ.
2. ການກະສິກຳ-ປ່າໄມ້ ແບບປະສົມປະສານ ເປັນວິທີການທີ່ມີປະສິດທິພາບ, ເປັນການນຳໃຊ້ທີ່ດິນໃນຫລາຍຮູບ ແບບ ເຊິ່ງທາງດ້ານເຕັກນິກແລ້ວ ມີສັດສ່ວນການນຳໃຊ້ທີ່ດິນສູງກວ່າ 1 ເຊິ່ງເປັນຕົວຊີ້ວັດຄວາມສຳເລັດໃນ ການເຮັດກະເສດສຸມແບບຍືນຍົງ ທີ່ຊ່ວຍເພີ່ມຜົນຜະລິດ.
3. ການກະສິກຳ-ປ່າໄມ້ ແບບປະສົມປະສານ ສາມາດເປັນຂະແໜງການທີ່ມີປະສິດທິຜົນ ໃນການແກ້ໄຂບັນຫາການ ເຂົ້າເຖິງຊັບພະຍາກອນ ເຊິ່ງສາມາດຊ່ວຍເສີມສ້າງບົດບາດຍິງ-ຊາຍ ແລະ ຄວາມເທົ່າທຽມກັນໃນສັງຄົມ ແລະ ສາມາດເປັນສູນລວມການສ້າງຄວາມອາດສາມາດໃຫ້ແກ່ຊຸມຊົນ.
4. ການກະສິກຳ-ປ່າໄມ້ ແບບປະສົມປະສານ ເປັນການປະຕິບັດທີ່ປະສົມປະສານ ເຊິ່ງນຳໃຊ້ພື້ນທີ່ໃນຫລາຍຮູບແບບ, ຊ່ວຍເປັນຈຸດເຊື່ອມຕໍ່ລະຫວ່າງຫລາຍໆເປົ້າໝາຍ ແລະ ຊ່ວຍແກ້ໄຂບັນຫາ ຄວາມແຕກຕ່າງລະຫວ່າງຂະແໜງ ການ.

ທິດທາງຕໍ່ໜ້າ

ຊ່ອງຫວ່າງລະຫວ່າງ ຂະແໜງການກະສິກຳ ແລະ ຂະແໜງການປ່າໄມ້ ທີ່ພົບເຫັນໃນປະຈຸບັນມີປະຫວັດອັນຍາວນານ. ຖ້າເບິ່ງທີ່ການແບ່ງຂອບເຂດລະຫວ່າງສອງຂະແໜງການແລ້ວ, ການຖົກຖຽງພຽງຢ່າງດຽວຈະບໍ່ສາມາດນຳໄປສູ່ການ ປ່ຽນແປງໄດ້. ການປ່ຽນແປງຕ້ອງເລີ່ມມາຈາກ ການຊີ້ນຳ-ນຳພາຈາກຂັ້ນເທິງ ທີ່ເຫັນຄວາມສຳຄັນຂອງຜົນປະໂຫຍດທີ່ຈະໄດ້ ຈາກລະບົບແທນການເນັ້ນໃສ່ແຕ່ອົງປະກອບພາຍນອກຂອງລະບົບ: ໃນເຂດທີ່ຍັງມີຄວາມທຸກຍາກ ການພັດທະ ນາເຂດຊົນນະບົດແບບຍືນຍົງທີ່ແທ້ຈິງຈະຄືບໜ້າໄດ້ ຈະຕ້ອງໄດ້ນຳໃຊ້ວິທີການໃໝ່ ທີ່ລວມເອົາສິດ, ສິ່ງກະຕຸ້ນ, ຄວາມເປັນຊ່ຽວຊານ(ເຕັກໂນໂລຍີ, ວັດຖຸດິບ) ແລະ ການສ້າງແຮງຈູງໃຈ (ຄວາມອາດສາມາດຂອງຄົນ) ເຂົ້າໃນການຈັດຕັ້ງປະຕິບັດ ເຊິ່ງການກະສິກຳ-ປ່າໄມ້ ແບບປະສົມ ປະສານສາມາດຕອບໂຈດໄດ້. ເຖິງຢ່າງໃດກໍຕາມ, ແນວ ຄວາມຄິດນີ້ບໍ່ໄດ້ເບິ່ງຂ້າມຜົນສຳເລັດຂອງແຕ່ລະຂະແໜງການໃນໄລຍະຜ່ານມາ, ແຕ່ເພື່ອໃຫ້ບັນລຸຈຸດປະສົງທີ່ກຳນົດ ໄວ້ໃນເປົ້າໝາຍ ການພັດທະນາແບບຍືນຍົງ ແລະ ສົນທິສັນຍາການຮັບມືກັບສະພາບການປ່ຽນແປງຂອງດິນຟ້າອາກາດ ເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງນຳວິທີການໃໝ່ໃນການຄຸ້ມຄອງ ແລະ ນຳໃຊ້ພື້ນທີ່ ເຊັ່ນ: ການກະສິກຳ-ປ່າໄມ້ ແບບປະສົມປະສານ ເປັນຕົ້ນ.

ຂໍ້ສະເໜີ

ພາຍໃຕ້ແຜນການຂອງອາຊຽນໃນການຮ່ວມມືດ້ານຂະແໜງການອາຫານ, ກະສິກຳ ແລະ ປ່າໄມ້, ແຕ່ລະປະເທດ ມີໂອກາດຢ່າງຫລວງຫລາຍໃນການນຳໃຊ້ການຮ່ວມມືຂອງເປົ້າໝາຍການພັດທະນາແບບຍືນຍົງ ແລະ ສົນທິສັນຍາປາຣີ ເພື່ອຮັບຮອງນະໂຍບາຍດ້ານການກະສິກຳ-ປ່າໄມ້ ເພື່ອສົ່ງເສີມການເຊື່ອມໂຍງ ແລະ ການຄຸ້ມຄອງກະສິກຳ ແລະ ປ່າໄມ້ ໃນຮູບແບບການນຳໃຊ້ທີ່ດິນ ແບບປະສົມປະສານກັບການປົກຫຸ້ມຂອງປ່າໄມ້ທີ່ມີໜ້າທີ່ອັນຫຼາກຫຼາຍ ເພື່ອໃຫ້ປະໂຫຍດໃນ ຫລາຍໆດ້ານ. ຂັ້ນຕອນການຈັດຕັ້ງປະຕິບັດຕົວຈິງ ທີ່ເປັນອັນສະເພາະນັ້ນອາດຂຶ້ນກັບປະຫວັດຄວາມເປັນມາ ແລະ ສາຍພົວພັນການເຮັດວຽກຮ່ວມກັນໃນປະຈຸບັນ ລະຫວ່າງ ຂະແໜງກະສິກຳ ແລະ ປ່າໄມ້ ໃນບັນດາປະເທດສະມາຊິກອາຊຽນ ຕ່າງໆ.

ຂໍ້ມູນອື່ນໆສຳລັບການຄົ້ນຄວ້າ

Chazdon RL, Brancalion PH, Laestadius L, Bennett-Curry A, Buckingham K, Kumar C, Moll-Rocek J, Vieira ICG, Wilson SJ. 2016. When is a forest a forest? Forest concepts and definitions in the era of forest and landscape restoration. *Ambio* March:1–13. DOI:10.1007/s13280-016-0772-y.

[FAO] Food and Agriculture Organization of the United Nations. 2000. *FRA 2000: on definitions of forest and forest change*. Forest Resources Assessment Working Paper 33. Rome: Food and Agriculture Organization of the United Nations.

[FAO] Food and Agriculture Organization of the United Nations. 2015. *FRA 2015: terms and definitions*. Forest Resources Assessment Working Paper 180. Rome: Food and Agriculture Organization of the United Nations.

Leimona B, Lusiana B, van Noordwijk M, Mulyoutami E, Ekadinata A, Amaruzaman S. 2015. Boundary work: knowledge co-production for negotiating payment for watershed services in Indonesia. *Ecosystem Services* 15:45–62.

Mbow C, van Noordwijk M, Prabhu R, Simons AJ. 2014. Knowledge gaps and research needs concerning agroforestry's contribution to sustainable development goals in Africa. *Current Opinion in Environmental Sustainability* 6:162–170.

van Noordwijk M, Minang PA. 2009. *If we cannot define it, we cannot save it*. ASB Policy Brief 15. Nairobi: ASB Partnership for the Tropical Forest Margins. http://www.asb.cgiar.org/pdfwebdocs/ASBPB15.pdf.

van Noordwijk M, Minang PA, Hairiah K. 2015. Swidden transitions in an era of climate change. In: Cairns MF, ed. *Shifting cultivation and environmental change: indigenous people, agriculture and forest conservation*. Oxford, UK: Earthscan. pp 261–280.

van Noordwijk M, Mbow C, Minang PA. 2015. *Trees as nexus for Sustainable Development Goals (SDGs): agroforestry for integrated options*. Policy Brief 50. Nairobi: ASB Partnership for the Tropical Forest Margins.

Zomer RJ, Neufeldt H, Xu J, Ahrends A, Bossio DA, Trabucco A, van Noordwijk M, Wang M. 2016. Global tree cover and biomass carbon on agricultural land: The contribution of agroforestry to global and national carbon budgets. *Scientific Reports* 6:29987.

Zomer RJ, Trabucco A, Coe R, Place F, van Noordwijk M, Xu JC. 2014. *Trees on farms: an update and reanalysis of agroforestry's global extent and socio-ecological characteristics*. Working Paper 179. Bogor, Indonesia: World Agroforestry Centre (ICRAF) Southeast Asia Regional Program. DOI: 10.5716/WP14064.PDF.

ຜູ້ຂຽນ

Meine van Noordwijk (m.vannoordwijk@cgiar.org)
Rodel Lasco (r.lasco@cgiar.org)

ການອ້າງອີງເອກະສານສະບັບທີ່ຖືກຕ້ອງ

van Noordwijk M, Lasco R. 2019. *Agroforestry in Southeast Asia: bridging the forestry–agriculture divide for sustainable development* (in Lao). Policy Brief no. 105. Agroforestry options for ASEAN series no. 1. Bogor, Indonesia: World Agroforestry (ICRAF) Southeast Asia Regional Program; Jakarta, Indonesia: ASEAN-Swiss Partnership on Social Forestry and Climate Change.

For more information, contact

AWG-SF Secretariat
Manggala Wanabhakti Building, Block VII, 4th Floor,
Jalan Gatot Subroto, Senayan, Jakarta 10270, Indonesia
Tel: +62-21-5703246, ext 478 - Fax: +62-21-5730136

World Agroforestry (ICRAF)
Southeast Asia Regional Program
Jl. CIFOR, Situ Gede, Sindang Barang, Bogor 16115
[PO Box 161, Bogor 16001] Indonesia
Tel: +(62) 251 8625415 | Fax: +(62) 251 8625416
Email: icraf-indonesia@cgiar.org
www.worldagroforestry.org/region/southeast-asia
blog.worldagroforestry.org

World Agroforestry

AWG-SF
ASEAN Working Group on Social Forestry

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

asean

Swedish International Agricultural Network Initiative
SIANI

ASEAN Working Group on Social Forestry (AWG-SF) is government-initiated network that aims to strengthen social forestry in Southeast Asia through the sharing of information and knowledge. AWG-SF established by the Association of Southeast Asian Nations (ASEAN) Senior Officials on Forestry (ASOF) in August 2005, linking government forestry policy makers directly with the civil society organizations, research organizations, academia, private sector, and all of whom share a vision of promoting social forestry policy and practices in ASEAN.

The **ASEAN-Swiss Partnership on Social Forestry and Climate Change (ASFCC)** is a Partnership Programme of ASEAN that aims to contribute to the ASEAN Mandate and Policy Framework through support for the ASEAN Working Group on Social Forestry and the ASEAN Multi sectoral Framework on Climate Change towards Food Security.